ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ

ເລກທີ 1515/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 22/09/2015

ຮຽນ : ທ່ານ ວ່າການຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອໍານວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈໍາກັດ ທີ່ນັບຖື.

ເລື່ອງ : ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນຄັ້ງທີ 4/2015.

- ອີງຕາມລະບຽບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 007/ຄຄຊ, ລົງວັນທີ 03 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າການເປີດເຜີຍຂໍ້ມູນ ເລກທີ 22/LSX, ລົງວັນທີ 07 ມັງກອນ 2011.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ **("ຜ-ຟຟລ")** ຂໍຖືເປັນກຽດແຈ້ງມະຕິສໍາຄັນ ຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 4/2015 ວັນທີ 21 ກັນຍາ 2015, ມີລາຍລະອຽດດັ່ງລຸ່ມນີ້:

1. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດໍາເນີນທຸລະກິດ ຂອງບໍລິສັດ 6 ເດືອນຕົ້ນປີ 2015 (01/01/2015 - 30/06/2015) ພາຍຫຼັງການຫັກເປັນຄັງສໍາຮອງຕາມລະບຽບການ, ຫັກຄັງສໍາຮອງເພື່ອການສ້ອມແປງເຂື່ອນ ແລະ ເພື່ອຂະຫຍາຍທຸລະກິດ ແລະຄັງສໍາຮອງເພື່ອໃຫ້ບໍາເນັດພະນັກງານ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກໍານົດສິດ ຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **09 ຕຸລາ 2015** ໃນອັດຕາ **110** ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນທີ່ຈະຈ່າຍປະມານ **184,72** ຕື້ກີບ ແລະ ກໍານົດວັນຈ່າຍເງິນ ປັນຜົນໃຫ້ຜູ້ຖືຮຸ້ນ ໃນວັນທີ **16 ຕຸລາ 2015** ແລະ ໃຫ້ນໍາເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນ ຜູ້ຖືຮຸ້ນປະຈໍາປີ 2015 ເພື່ອພິຈາລະນາອະນຸມັດ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

<u>ຜູ້ອໍານວຍການໃຫຍ່</u>

ພະລັງງານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງວຽງຈັນ

ບຸນອູ້ມ ສີວັນເພັງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ ຕູ້ປ.ນ 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la